ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ພະແນກສາທາລະນະສຸກແຂວງ

ເລກທີ 1241 /ສທຂ.ຈສ

ແຂວງຈຳປາສັກ,ວັນທີ 7 ເມສາ 2026

# ໜັງສືເຊີນເຂົ້າຮ່ວມການປະມູນ

1. ພະແນກສາທາລະນະສຸກແຂວງຈຳປາສັກໄດ້ນຳໃຊ້ຊ່ອງເງິນແຜນງົບປະມານ ແລະ ການລົງທຶນປີ 2025 ເພື່ອເຊີນບັນດາ ບໍລິສັດທີ່ສົນໃຈ ເຂົ້າຮ່ວມການປະມູນການຮື້ຖອນອາຄານຕຶກສົງ ແລະ ຕຶກວັນນະໂລກ ແລະ ການສ້ອມແປງປັບປຸງອາຄານຕຶກກາຍະບຳບັດໂຮງໝໍແຂວງຈຳປາສັກ ເພື່ອກຽມພື້ນທີ່ ໃນການຮອງຮັບການກໍ່ສ້າງອາຄານໂຮງໝໍຫຼັງໃໝ່ ໃນໂຮງໝໍແຂວງຈຳປາສັກ,ໄລຍະການຮື້ຖອນແມ່ນໃຫ້ສຳເລັດ ພາຍໃນ 4 ເດືອນ
2. ການປະມູນນີ້ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ເອກະສານຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ຜູ້ປະມູນຕ້ອງມີສຳເນົາເອກະສານໃບອະນຸຍາດດຳເນີນທຸລະກິດ,ໃບທະບຽນວິສະຫະກິດທາງດ້ານການກໍ່ສ້າງ-ສ້ອມແປງເຄຫາສະຖານ ແລະໃບມອບພັນທະອາກອນປີ 2026ຫລື 2025 ທີ່ຖືກຕ້ອງຕາມກົດໝາຍ
4. ບໍລິສັດໃດທີ່ສົນໃຈຂໍເຊີນຕິດຕໍ່ຂໍ້ມູນໄດ້ທີ່ຂະແໜງບໍລິຫານ,ແຜນການ ແລະ ການເງິນພະແນກສາທາລະນະສຸກ ແຂວງຈຳປາສັກຕາມໂມງລັດຖະການ ເລີ່ມແຕ່ວັນທີ 7/4/2026 ເຖິງວັນທີ 7/5/2026 ໃນລາຄາ 1.500.000ກີບ /ຊອງ ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ ( ວິທີການຊຳລະຕ້ອງຈ່າຍເປັນເງິນສົດ )
5. ຊອງປະມູນການຮື້ຖອນອາຄານຕຶກສົງ ແລະ ຕຶກວັນນະໂລກ ໂຮງໝໍແຂວງຈຳປາສັກຈະຕ້ອງໄດ້ສົ່ງບໍ່ໃຫ້ກາຍເວລາ 09:00ໂມງ ຂອງວັນທີ 7/5/2026 ທີ່ ຂະແໜງບໍລິຫານ,ແຜນການ ແລະ ການເງິນພະແນກສາທາລະນະສຸກ ແຂວງຈຳປາສັກ,ຊອງປະມູນສົ່ງຊ້າກ່ວາເວລາທີ່ໄດ້ກຳນົດໄວ້ຈະບໍ່ຮັບເອົາແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ ແລະ ຈະດຳເນີນເປີດຊ່ອງໃນເວລາ 09:30ໂມງ ຂອງວັນດຽວກັນໂດຍຊ້ອງໜ້າຄະນະກຳມະການ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງຂັນປະມູນ
6. ສອບຖາມຂໍ້ມູເພີ່ມເຕີມກະລຸນາຕິດຕໍ່ພົວພັນທ່ານ ດຣ ນາງ ເກດແກ້ວ ຫຼວງໄຊ ຫົວໜ້າຂະແໜງບໍລິຫານແຜນການແລະ ການເງິນ ພະແນກສາທາລະນະສຸກແຂວງ ຈຳປາສັກ ຕາມທີ່ຢູ່ຂ້າງລຸ່ມນີ້:

- **ຊື່ສຳນັກງານ:** ພະແນກສາທາລະນະສຸກແຂວງຈຳປາສັກ
- **ທີ່ຕັ້ງ:** ກິໂລແມັດ 03, ທາງເລກທີ 13 ໃຕ້, ບ້ານໂຊກອຳນວຍ, ນະຄອນປາກເຊ, ແຂວງຈຳປາສັກ
- ເລກໂທລະສັບ: 031 212017, 020 55639023
- ອີເມວ: palaypick@yahoo.com

ຫົວໜ້າພະແນກ

ພະແນກ ສາທາລະນະສຸກ ແຂວງຈຳປາສັກ

ປອ. ດຣ ນັນທະສານ ວັນນະວົງ

Nanthasane VANNAVONG